ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ເລກທີ 318/ທຫລ

ນະຄອນຫຼວງວຽງຈັນ, ວັນທີ 19 ພຶດສະພາ 2020

# ຂໍ້ຕົກລົງ
# ວ່າດ້ວຍໂຄງການສິນເຊື່ອເພື່ອຊຸກຍູ້ການຜະລິດ ແລະ ແກ້ໄຂຜົນກະທົບ ຈາກພະຍາດ COVID-19

- ອີງຕາມ ກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ (ສະບັບປັບປຸງ) ສະບັບເລກທີ 47/ສພຊ ລົງວັນທີ 19 ມິຖຸນາ 2018;
- ອີງຕາມ ການເຫັນດີເອກະພາບຂອງກອງປະຊຸມຄະນະຜູ້ວ່າການ ທຫລ ສະບັບເລກທີ08/ທຫລ ລົງວັນທີ 25 ມີນາ 2020 ແລະ ກອງປະຊຸມຄະນະປະຈຳພັກ-ຄະນະຜູ້ວ່າການ ທຫລ ຄັ້ງວັນທີ 14 ພຶດສະພາ 2020;
- ອີງຕາມ ສະພາບການລະບາດຂອງພະຍາດອັກເສບປອດຈາກເຊື້ອຈຸລະໂລກສາຍພັນໃໝ່ (COVID-19).

## ຜູ້ວ່າການທະນາຄານແຫ່ງ ສປປ ລາວ ຕົກລົງ:

## ໝວດທີ I
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ ແລະ ລະບຽບການກ່ຽວກັບ "ໂຄງການສິນເຊື່ອເພື່ອຊຸກຍູ້ການຜະລິດ ແລະ ແກ້ໄຂຜົນກະທົບຈາກພະຍາດອັກເສບປອດຈາກເຊື້ອຈຸລະໂລກສາຍພັນໃໝ່ (COVID-19)" ຊຶ່ງເປັນໂຄງການສະເພາະກິດຂອງ ທະນາຄານແຫ່ງ ສປປ ລາວ ໂດຍນຳໃຊ້ກົນໄກການສະໜອງສິນເຊື່ອຜ່ານທະນາ ຄານທຸລະກິດ ທີ່ເຂົ້າຮ່ວມໂຄງການຕາມເງື່ອນໄຂ ແລະ ເປົ້າໝາຍທີ່ກຳນົດໃນຂໍ້ຕົກລົງສະບັບນີ້ ເພື່ອຜັນຂະ ຫຍາຍເນື້ອໃນນະໂຍບາຍ ແລະ ມາດຕະການຂອງລັດຖະບານໃນການຫຼຸດຜ່ອນ ແລະ ແກ້ໄຂຜົນກະທົບຈາກການລະບາດຂອງພະຍາດ COVID-19 ຕໍ່ບຸກຄົນ, ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ໃນຂະແໜງການຜະລິດ-ທຸລະກິດ ກໍຄືຕໍ່ເສດຖະກິດຂອງ ສປປ ລາວ.

ຈຸດປະສົງຫຼັກຂອງໂຄງການນີ້ ແມ່ນແນໃສ່ເພື່ອສ້າງເງື່ອນໄຂໃຫ້ບຸກຄົນ, ຈຸນລະວິສາຫະກິດ ແລະ ວິສາຫະກິດຂະໜາດນ້ອຍ ແລະ ກາງ ຕາມກຳນົດໃນມາດຕາ 6 ຂອງຂໍ້ຕົກລົງສະບັບນີ້ ທີ່ໄດ້ຮັບຜົນກະທົບສາມາດເຂົ້າຫາແຫຼ່ງທຶນ ທີ່ມີຕົ້ນທຶນຕໍ່າ ໄດ້ສະດວກຍິ່ງຂຶ້ນ ເພື່ອໃຫ້ສາມາດຟື້ນຟູ ແລະ ສືບຕໍ່ການດຳເນີນທຸລະກິດ ໃນໄລຍະທີ່ຍັງມີການລະບາດ ແລະ ພາຍຫຼັງການລະບາດໄດ້ຮັບການຄວບຄຸມ, ຊຶ່ງຈະເປັນການປະກອບສ່ວນຊຸກຍູ້ການຜະລິດພາຍໃນ, ຮັບປະກັນຄວາມໝັ້ນຄົງດ້ານສະບຽງອາຫານ ແລະ ກະຕຸ້ນເສດຖະກິດຂອງ ສປປ ລາວ.


ທະນາຄານແຫ່ງ ສປປ ລາວ, ຖະໜົນ ຍອນເນ, ນະຄອນຫຼວງວຽງຈັນ, ຕູ້ໄປສະນີ 19, ໂທລະພິມ: 4304 BNL.VTE.LS
ໂທລະສານ: (856)-21-213108 ໂທລະສັບ: 213109-213110 Email: BOL@bol.gov.la; www.bol.gov.la

ມາດຕາ 2 ໄລຍະເວລາຂອງໂຄງການ

ໂຄງການນີ້ມີໄລຍະເວລາທັງໝົດ 18 ເດືອນ ນັບແຕ່ມື້ອອກຂໍ້ຕົກລົງສະບັບນີ້ເປັນຕົ້ນໄປ.

ມາດຕາ 3 ຫຼັກການພື້ນຖານການປ່ອຍສິນເຊື່ອ

ການຈັດຕັ້ງປະຕິບັດໂຄງການນີ້ ຕ້ອງປະຕິບັດຕາມຫຼັກການພື້ນຖານ ດັ່ງນີ້:

1. ສອດຄ່ອງກັບຈຸດປະສົງ ແລະ ເປົ້າໝາຍທີ່ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້;
2. ຮັບປະກັນການສະໜອງສິນເຊື່ອ ໃຫ້ສາມາດປະກອບສ່ວນຊຸກຍູ້ການຜະລິດ ແລະ ແກ້ໄຂຜົນກະທົບຈາກການລະບາດຂອງພະຍາດ COVID-19 ຕໍ່ ບຸກຄົນ, ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ໃນຂະແໜງການຜະລິດ-ທຸລະກິດ ເພື່ອກະຕຸ້ນເສດຖະກິດຂອງ ສປປ ລາວ;
3. ຮັບປະກັນປະສິດທິຜົນໂຄງການ ແລະ ປົກປັກຮັກສາແຫຼ່ງທຶນ ບໍ່ໃຫ້ຕົກເຮ່ຍເສຍຫາຍ.

ມາດຕາ 4 ຂອບເຂດການນຳໃຊ້

ຂໍ້ຕົກລົງສະບັບນີ້ ນຳໃຊ້ສະເພາະທະນາຄານແຫ່ງ ສປປ ລາວ ແລະ ທະນາຄານທຸລະກິດທີ່ເຂົ້າຮ່ວມໂຄງການ.

## ໝວດທີ II
## ແຫຼ່ງທຶນ, ເປົ້າໝາຍການນຳໃຊ້, ນະໂຍບາຍ ແລະ ເງື່ອນໄຂໃນການປ່ອຍກູ້ຕໍ່

ມາດຕາ 5 ແຫຼ່ງທຶນຂອງໂຄງການ

ແຫຼ່ງທຶນສະໜັບສະໜູນໂຄງການສິນເຊື່ອເພື່ອຊຸກຍູ້ການຜະລິດ ແລະ ແກ້ໄຂຜົນກະທົບຈາກພະຍາດ COVID-19 ແມ່ນມາຈາກທະນາຄານແຫ່ງ ສປປ ລາວ.

ມາດຕາ 6 ເປົ້າໝາຍການນຳໃຊ້ແຫຼ່ງທຶນ

ເປົ້າໝາຍການນຳໃຊ້ແຫຼ່ງທຶນຂອງໂຄງການນີ້ແມ່ນ ທະນາຄານທຸລະກິດທີ່ເຂົ້າຮ່ວມໂຄງການ ຈະນຳເງິນກູ້ທີ່ໄດ້ຈາກໂຄງການໄປສະໜອງສິນເຊື່ອຕໍ່ໃຫ້ແກ່ບຸກຄົນ, ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ທີ່ທຳການປູກຝັງ, ລ້ຽງສັດ, ການຜະລິດ ແລະ ປຸງແຕ່ງຜະລິດຕະພັນກະສິກຳ ແລະ ອຸດສາຫະກຳ, ຜະລິດສິນຄ້າອຸປະໂພກ-ບໍລິໂພກ, ຂະແໜງທ່ອງທ່ຽວ ແລະ ການບໍລິການປິ່ນອ້ອມ, ຫັດຖະກຳ ແລະ ທຸລະກິດອື່ນທີ່ສົ່ງເສີມການຜະລິດ ແລະ ການສົ່ງອອກ.

ມາດຕາ 7 ນະໂຍບາຍສິນເຊື່ອຂອງໂຄງການ

ທະນາຄານແຫ່ງ ສປປ ລາວ ມີນະໂຍບາຍສິນເຊື່ອໃຫ້ແກ່ທະນາຄານທຸລະກິດ ທີ່ເຂົ້າຮ່ວມໂຄງການ ດັ່ງນີ້:

1. ອັດຕາດອກເບ້ຍ: ຄົງທີ່ 3,00% ຕໍ່ປີ;
2. ໄລຍະເວລາກູ້: ສູງສຸດບໍ່ເກີນ 6 ປີ;
3. ການຊຳລະ:
   - ຕົ້ນທຶນ: ໄລຍະປອດໜີ້ຕົ້ນທຶນ 3 ປີ (ເລີ່ມແຕ່ປີທີ 1 ຮອດປີທີ 3) ແລະ ເລີ່ມຊຳລະໃນທ້າຍປີທີ 4, ທ້າຍປີທີ 5 ແລະ ທ້າຍປີທີ 6 ໃນອັດຕາສ່ວນ 30%, 30% ແລະ 40% ຂອງ ຍອດເງິນກູ້ລວມ ຕາມລຳດັບ;
   - ດອກເບ້ຍ: ປີລະ 2 ຄັ້ງ (ທ້າຍເດືອນ 6 ແລະ ທ້າຍເດືອນ 12 ຂອງປີ).

4. ວົງເງິນກູ້: ວົງເງິນກູ້ລວມທີ່ແຕ່ລະທະນາຄານທຸລະກິດ ຈະໄດ້ຮັບແມ່ນຈະພິຈາລະນາບົນພື້ນຖານແຜນການສະໜອງສິນເຊື່ອຂອງທະນາຄານທຸລະກິດ ທີ່ທະນາຄານທຸລະກິດໄດ້ສະເໜີມາ ຊຶ່ງຕ້ອງສອດຄ່ອງກັບຈຸດປະສົງ, ຫຼັກການ ແລະ ເປົ້າໝາຍ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້.

**ມາດຕາ 8 ເງື່ອນໄຂການປ່ອຍກູ້ຂອງທະນາຄານທຸລະກິດໃຫ້ແກ່ລູກຄ້າ**

ທະນາຄານທຸລະກິດທີ່ໄດ້ຮັບເງິນກູ້ຈາກທະນາຄານແຫ່ງ ສປປ ລາວ ຕ້ອງປະຕິບັດເງື່ອນໄຂຕົ້ນຕໍ ດັ່ງລຸ່ມນີ້:

1. ກຳນົດອັດຕາດອກເບ້ຍສະໜອງສິນເຊື່ອໃຫ້ແກ່ບຸກຄົນ, ຈຸນລະວິສາຫະກິດ ແລະ ວິສາຫະກິດຂະໜາດນ້ອຍ ແລະ ກາງ ໃນອັດຕາສ່ວນຕ່າງ ບໍ່ເກີນ 2,5% ທຽບໃສ່ອັດຕາດອກເບ້ຍທີ່ທະນາຄານແຫ່ງ ສປປ ລາວ ສະໜອງທຶນໃຫ້ພາຍໃຕ້ໂຄງການນີ້;
2. ປ່ອຍກູ້ໃຫ້ບຸກຄົນ, ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ຕ້ອງສອດຄ່ອງກັບເປົ້າໝາຍທີ່ໄດ້ກຳນົດໄວ້ໃນມາດຕາ 6 ຂອງຂໍ້ຕົກລົງສະບັບນີ້ ດັ່ງນີ້:
3. ສຳລັບການຊຳລະຕົ້ນທຶນຂອງສິນເຊື່ອທີ່ມີອາຍຸເກີນ 1 ປີ ຂຶ້ນໄປ ຂອງລູກຄ້າຂອງທະນາຄານທຸລະກິດພາຍໃຕ້ໂຄງການນີ້ ທະນາຄານທຸລະກິດຕ້ອງມີໄລຍະປອດໜີ້ຕົ້ນທຶນຢ່າງໜ້ອຍ 1/3 ຂອງໄລຍະເວລາກູ້ທັງໝົດໃຫ້ແກ່ລູກຄ້າ.

## ໝວດທີ III
## ເງື່ອນໄຂໃນການເຂົ້າຮ່ວມໂຄງການ, ການສະເໜີ ແລະ ພິຈາລະນາອະນຸມັດຂໍສິນເຊື່ອ

**ມາດຕາ 9 ເງື່ອນໄຂໃນການເຂົ້າຮ່ວມໂຄງການ**

ທະນາຄານທຸລະກິດ ທີ່ມີຈຸດປະສົງເຂົ້າຮ່ວມໂຄງການ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ມີນະໂຍບາຍ ແລະ/ຫຼື ລະບຽບສິນເຊື່ອສະເພາະຂອງທະນາຄານທຸລະກິດ ຫຼື ມີລະບຽບການສະເພາະກ່ຽວກັບການປ່ອຍສິນເຊື່ອໃຫ້ແກ່ບຸກຄົນ, ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ແລະ ຂໍ້ມູນຢັ້ງຢືນຊັດເຈນກ່ຽວກັບຜົນກະທົບຈາກການລະບາດຂອງພະຍາດ COVID-19 ຕາມທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງວ່າດ້ວຍນະໂຍບາຍສິນເຊື່ອ ເພື່ອແກ້ໄຂຜົນກະທົບ ຈາກສະພາບການລະບາດຂອງພະຍາດອັກເສບປອດຈາກເຊື້ອຈຸລະໂລກສາຍພັນໃໝ່ (COVID-19) ສະບັບເລກທີ 238/ທຫລ, ລົງວັນທີ 26 ມີນາ 2020;
2. ສະເໜີເຈດຈຳນົງເຂົ້າຮ່ວມໂຄງການ ແລະ ມີແຜນການສະໜອງສິນເຊື່ອ ທີ່ຈະແຈ້ງສອດຄ່ອງກັບຈຸດປະສົງ, ເປົ້າໝາຍ ແລະ ເງື່ອນໄຂການປ່ອຍກູ້ຕໍ່ໃຫ້ແກ່ບຸກຄົນ, ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້ ເພື່ອສະເໜີໃຫ້ທະນາຄານແຫ່ງ ສປປ ລາວ ພິຈາລະນາ;
3. ຮັບປະກັນການຊຳລະຄືນເງິນກູ້ຕາມສັນຍາເງິນກູ້ ລະຫວ່າງ ທະນາຄານແຫ່ງ ສປປ ລາວ ແລະ ທະນາຄານທຸລະກິດທີ່ເຂົ້າຮ່ວມໂຄງການ;
4. ມີລະບົບການຄຸ້ມຄອງບໍລິຫານສິນເຊື່ອທີ່ດີ;
5. ເງື່ອນໄຂອື່ນ ຕາມການກຳນົດຂອງທະນາຄານແຫ່ງ ສປປ ລາວ ແຕ່ລະໄລຍະ.

**ມາດຕາ 10 ການສະເໜີຂໍສິນເຊື່ອໂຄງການ**

ທະນາຄານທຸລະກິດ ທີ່ມີຈຸດປະສົງຂໍສິນເຊື່ອໂຄງການນີ້ຈາກທະນາຄານແຫ່ງ ສປປ ລາວ ຕ້ອງສະເໜີເຈດຈຳນົງ ແລະ ປະກອບເອກະສານ ດັ່ງລຸ່ມນີ້:

1. ໜັງສືສະເໜີສະແດງເຈດຈຳນົງຂໍສິນເຊື່ອໂຄງການ ຫາທະນາຄານແຫ່ງ ສປປ ລາວ;
2. ບົດປະເມີນຜົນກະທົບຈາກການລະບາດຂອງພະຍາດ COVID-19 ທີ່ລະອຽດຈະແຈ້ງ, ແຜນການແກ້ໄຂບັນຫາສິນເຊື່ອ ແລະ ແຜນການປ່ອຍກູ້ໃຫ້ແຕ່ລະເປົ້າໝາຍ ຕາມເງື່ອນໄຂທີ່ກຳນົດໃນຂໍ້ຕົກລົງສະບັບນີ້;
3. ສຳເນົານະໂຍບາຍ ແລະ/ຫຼື ລະບຽບສິນເຊື່ອສະເພາະຂອງທະນາຄານທຸລະກິດ ຫຼື ລະບຽບການສະເພາະກ່ຽວກັບການປ່ອຍສິນເຊື່ອໃຫ້ແກ່ບຸກຄົນ, ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ແລະ ຂໍ້ມູນຢັ້ງຢືນຊັດເຈນກ່ຽວກັບຜົນກະທົບຈາກການລະບາດຂອງພະຍາດ COVID-19 ຕາມທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງວ່າດ້ວຍນະໂຍບາຍສິນເຊື່ອ ເພື່ອແກ້ໄຂຜົນກະທົບ ຈາກສະພາບການລະບາດຂອງພະຍາດອັກເສບປອດຈາກເຊື້ອຈຸລະໂລກສາຍພັນໃໝ່ (COVID-19) ສະບັບເລກທີ 238/ທຫລ, ລົງວັນທີ 26 ມີນາ 2020;
4. ເອກະສານຕອບແບບສອບຖາມຕາມແບບຟອມຂອງທະນາຄານແຫ່ງ ສປປ ລາວ ກຳນົດໄວ້;
5. ເອກະສານເພີ່ມເຕີມອື່ນ ຕາມການສະເໜີຂອງທະນາຄານແຫ່ງ ສປປ ລາວ.

**ມາດຕາ 11 ການພິຈາລະນາອະນຸມັດສິນເຊື່ອຂອງທະນາຄານແຫ່ງ ສປປ ລາວ**

ທະນາຄານແຫ່ງ ສປປ ລາວ ພິຈາລະນາອະນຸມັດສິນເຊື່ອ ໃຫ້ທະນາຄານທຸລະກິດທີ່ເຂົ້າຮ່ວມໂຄງການ ບົນພື້ນຖານທະນາຄານທຸລະກິດນັ້ນປະຕິບັດຕາມເງື່ອນໄຂ ແລະ ຂັ້ນຕອນຂອງການສະເໜີຂໍສິນເຊື່ອທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້ ໂດຍຈະໃຊ້ເວລາພິຈາລະນາ ແລະ ແຈ້ງຕອບທະນາຄານທຸລະກິດດັ່ງກ່າວ ກ່ຽວກັບການອະນຸມັດ ຫຼື ປະຕິເສດການອະນຸມັດສິນເຊື່ອ ພາຍໃນ 15 ວັນລັດຖະການ.

## ໝວດທີ IV
## ການຄຸ້ມຄອງ, ຕິດຕາມ ກວດກາ ແລະ ລາຍງານ

**ມາດຕາ 12 ການຄຸ້ມຄອງ ແລະ ຕິດຕາມ ກວດກາ**

ທະນາຄານແຫ່ງ ສປປ ລາວ ເປັນຜູ້ຄຸ້ມຄອງ ແລະ ຕິດຕາມ ກວດກາ ກັບບັນດາທະນາຄານທຸລະກິດທີ່ເຂົ້າຮ່ວມໂຄງການ ໂດຍມອບໃຫ້ກົມບໍລິການທະນາຄານ ສົມທົບກັບກົມກ່ຽວຂ້ອງ ປະຕິບັດ ແລະ ລົງຕິດຕາມ ກວດກາ ການນຳໃຊ້ເງິນກູ້ຂອງບຸກຄົນ, ຈຸນລະວິສາຫະກິດ ແລະ ວິສາຫະກິດຂະໜາດນ້ອຍ ແລະ ກາງ ທີ່ໄດ້ຮັບເງິນກູ້ຈາກທະນາຄານທຸລະກິດ ຕາມຄວາມເໝາະສົມ.

**ມາດຕາ 13 ການລາຍງານ**

ທະນາຄານທຸລະກິດທີ່ເຂົ້າຮ່ວມໂຄງການ ຕ້ອງໄດ້ສະຫຼຸບລາຍງານການນຳໃຊ້ເງິນກູ້ ໃຫ້ແກ່ກົມບໍລິການທະນາຄານ ຂອງທະນາຄານແຫ່ງ ສປປ ລາວ ຊາບ ຢ່າງເປັນລາຍລັກອັກສອນ ໃນທຸກໄຕມາດ ພາຍໃນກຳນົດເວລາ 30 ວັນ ນັບແຕ່ວັນສິ້ນສຸດໄຕມາດ ເປັນຕົ້ນໄປ ຫຼື ຕາມການແຈ້ງຂອງ ທຫລ ເມື່ອເຫັນວ່າມີຄວາມຈຳເປັນ.

ກົມບໍລິການທະນາຄານ ຂອງທະນາຄານແຫ່ງ ສປປ ລາວ ລາຍງານຜົນການຈັດຕັ້ງປະຕິບັດໂຄງການໃຫ້ທ່ານຜູ້ວ່າການ ທະນາຄານແຫ່ງ ສປປ ລາວ ຊາບໃນທຸກໄຕມາດ ຫຼື ເມື່ອເຫັນວ່າມີຄວາມຈຳເປັນ.

# ໝວດທີ V
# ບົດບັນຍັດສຸດທ້າຍ

**ມາດຕາ 14 ການຈັດຕັ້ງປະຕິບັດ**

ບັນດາກົມພາຍໃນທະນາຄານແຫ່ງ ສປປ ລາວ, ສາຂາ ທະນາຄານແຫ່ງ ສປປ ລາວ ປະຈຳພາກ, ທະນາຄານທຸລະກິດ ແລະ ພາກສ່ວນທີ່ກ່ຽວຂ້ອງຈົ່ງຮັບຮູ້, ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດຕາມຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 15 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ຜູ້ວ່າການທະນາຄານແຫ່ງ ສປປ ລາວ**

**ສອນໄຊ ສິດພະໄຊ**